# ກົດຂອງລັດປ່ຽນແປງເງິນລາຍໄດ້ CALWORKS ທີ່ໄດ້ຮັບແຕ່ບໍ່ຕ້ອງນັບ

ຮອດວັນທີ 1 ມິຖຸນາ 2020, ມີກົດລະບຽບໃໝ່ຂອງໂຄງການ CalWORKs ທີ່ອາດຈະປ່ຽນແປງການຊ່ວຍເຫຼືອເງິນສົດຂອງທ່ານ. ເມື່ອຄິດໄລ່ເງິນຊ່ວຍເຫຼືອຂອງທ່ານ, ຈຳນວນເງິນທີ່ທ່ານໄດ້ຮັບຈະອີງຕາມຂະໜາດຄົວເຮືອນຂອງທ່ານແລະລາຍໄດ້ທີ່ທ່ານອາດຈະມີ.

ກົດໝາຍອະນຸຍາດໃຫ້ບໍ່ຕ້ອງໄລ່ເອົາລາຍໄດ້ສະເພາະບາງຢ່າງໄປລວມນຳເງິນສົດຊ່ວຍເຫຼືອຂອງທ່ານ (ລາຍໄດ້ທີ່ບໍ່ຕ້ອງນັບ). ກົດໝາຍໃໝ່ປ່ຽນແປງລາຍໄດ້ທີ່ໄດ້ຮັບແຕ່ບໍ່ຕ້ອງນັບ (EID). ການປ່ຽນແປງເຫຼົ່ານີ້ອາດຈະໝາຍຄວາມວ່າການຊ່ວຍເຫຼືອເງິນສົດ CalWORKs ຂອງທ່ານອາດຈະເພີ່ມຂຶ້ນໃນເດືອນທຳອິດຂອງໄລຍະການຈ່າຍຄັ້ງຕໍ່ໄປຂອງທ່ານ.

ໃນບາງກໍລະນີ, ລາຍງານການປ່ຽນແປງໂດຍສະໝັກໃຈອາດຈະເຮັດໃຫ້ສະຫວັດດີການຂອງໂຄງການໜຶ່ງເພີ່ມຂຶ້ນ, ໃນຂະນະທີ່ຫຼຸດຜ່ອນສະຫວັດດີການຂອງໂຄງການອື່ນ. ຍົກຕົວຢ່າງເຊັ່ນ, ການເພີ່ມຂຶ້ນຂອງ CalWORKs ອາດຈະເຮັດໃຫ້ສະຫວັດດີການ CalFresh ຫຼຸດລົງ.

ວິທີການຄິດໄລ່ການຊ່ວຍເຫຼືອເງິນສົດ CalWORKs ໃຫມ່ຂອງທ່ານແມ່ນ:

- ຖ້າຄອບຄົວຂອງທ່ານມີລາຍໄດ້ຫຼາຍກວ່າ 500 ໂດລາຕໍ່ເດືອນຂອງລາຍໄດ້ທີ່ມາຈາກການເງິນຊ່ວຍເຫຼືອຄົນພິການທີ່ຍັງບໍ່ໄດ້ຮັບ (DBI) ເທົ່ານັ້ນ $500 ຈະບໍ່ຕ້ອງນັບ. (DBI ອາດເປັນເງິນປະກັນສັງຄົມໃຫ້ຄົນພິການ, ເງິນຊົດເຊີຍການບາດເຈັບຈາກການເຮັດວຽກ, ສະຫວັດດີການຄົນພິການຂອງລັດ, ແລະອື່ນໆ). DBI ທີ່ຫຼາຍກວ່າ $500 ຈະຖືກຫັກອອກຈາກຈຳນວນເງິນຊ່ວຍເຫຼືອຂອງທ່ານ.
- ຖ້າຄອບຄົວຂອງທ່ານໄດ້ຮັບເງິນ DBI 500 ໂດລ່າ ຫຼືໜ້ອຍກວ່າຕໍ່ເດືອນ, ບໍ່ມີ DBI ໃດຈະຖືກນຳໄປຄິດໄລ່ເມື່ອຄິດໄລ່ເງິນສົດຊ່ວຍເຫຼືອຂອງທ່ານ.
- ຖ້າທ່ານຍັງມີລາຍໄດ້ທີ່ໄດ້ຮັບອື່ນ, ຈຳນວນເງິນ DBI ໃດໆ ຂອງເງິນ 500 ໂດລາທີ່ບໍ່ຕ້ອງນັບທີ່ຍັງເຫຼືອຈະບໍ່ຖືກນັບເປັນລາຍໄດ້ ເມື່ອຄິດໄລ່ເງິນສົດຊ່ວຍເຫຼືອຂອງທ່ານ.
- ນອກຈາກນັ້ນ, 50% ຂອງລາຍໄດ້ທີ່ໄດ້ຮັບທີ່ຍັງເຫຼືອ ກໍ່ຈະຖືກຍົກເວັ້ນບໍ່ຕ້ອງນັບ.
- ສ່ວນທີ່ເຫຼືອແມ່ນລາຍໄດ້ສຸດທິຂອງທ່ານທີ່ນັບໄດ້. ນີ້ແມ່ນຈຳນວນເງິນທີ່ຈະຖືກນຳມາເພື່ອຄິດໄລ່ເງິນຊ່ວຍເຫຼືອຂອງທ່ານ.

ຂ້າງລຸ່ມນີ້ແມ່ນຕົວຢ່າງວິທີການຄິດໄລ່ເງິນສົດໃນປະຈຸບັນ ຂອງໜ່ວຍຊ່ວຍເຫຼືອ (AU) ໂດຍຄິດສະເພາະລາຍໄດ້ທີ່ໄດ້ຮັບເທົ່ານັ້ນ.

ຄອບຄົວທີ່ມີແມ່ແລະລູກສອງຄົນທີ່ມີລາຍໄດ້ລວມ 1200 ໂດລາຕໍ່ເດືອນ. ຄອບຄົວທີ່ຢູ່ອາໄສໃນເຂດ 1.

ຕົວຢ່າງນີ້ໃຊ້ເງິນ $225 EID ໃນປັດຈຸບັນ:

| | |
|---|---|
| $1200 | ຍອດລວມລາຍໄດ້ |
| - 225 | EID |
| $975 | ລວມ |
| - 487.50 | 50 ເປີເຊັນຂອງ EID |
| $487 | *ລາຍໄດ້ທີ່ນັບໄດ້ທັງໝົດ |
| $878 | ການຈ່າຍເງິນຊ່ວຍເຫຼືອສູງສຸດ (ຄອບຄົວ 3 ຄົນໃນເຂດ 1) |
| - 487 | ລາຍໄດ້ທີ່ນັບໄດ້ທັງໝົດ |
| $391 | ຈຳນວນເງິນຊ່ວຍເຫຼືອປະຈຳເດືອນ |

ນີ້ເປັນຕົວຢ່າງດຽວກັນໂດຍໃຊ້ເງິນ $500 EID ທີ່ສູງກວ່າ:

| | |
|---|---|
| $1200 | ຍອດລວມລາຍໄດ້ |
| - 500 | EID |
| $700 | ລວມ |
| - 350 | 50 ເປີເຊັນຂອງ EID |
| $350 | ລາຍໄດ້ທີ່ນັບໄດ້ທັງໝົດ |
| $878 | ການຈ່າຍເງິນຊ່ວຍເຫຼືອສູງສຸດ (ຄອບຄົວ 3 ຄົນໃນເຂດ 1) |
| - 350 | ລາຍໄດ້ທີ່ນັບໄດ້ທັງໝົດ |
| $528 | ຈຳນວນເງິນຊ່ວຍເຫຼືອປະຈຳເດືອນ |

* ລາຍໄດ້ທີ່ນັບໄດ້ທັງໝົດຈະປັບລົງເປັນຈຳນວນເງິນໂດລາເຕັມຈຳນວນ.

ຂ້າງລຸ່ມນີ້ແມ່ນຕົວຢ່າງວິທີການຄິດໄລ່ເງິນສົດຊ່ວຍເຫຼືອໃນ AU ດ້ວຍລາຍໄດ້ຈາກເງິນຊ່ວຍເຫຼືອຄົນພິການ.

ຄອບຄົວທີ່ມີແມ່ແລະລູກສອງຄົນທີ່ມີລາຍໄດ້ລວມ 1200 ໂດລາຕໍ່ເດືອນ. ເດັກນ້ອຍແຕ່ລະຄົນໄດ້ຮັບເງິນສະຫວັດດີການຊ່ວຍເຫຼືອຄົນພິການ 200 ໂດລາໂດຍອີງຕາມຄໍາຮອງຂໍຍອມຄວາມພິການຂອງພໍ່ແມ່ທີ່ບໍ່ຢູ່ນໍາ.

| | |
|---|---|
| $400 | ເງິນຊ່ວຍເຫຼືອຄົນພິການທີ່ຍັງບໍ່ໄດ້ຮັບ (DBI) |
| - 500 | EID |
| ($-100) | DBI ບໍ່ໄດ້ໃຊ້ທີ່ບໍ່ຕ້ອງນັບ |
| $1200 | ຍອດລວມລາຍໄດ້ |
| - 100 | DBI ບໍ່ໄດ້ໃຊ້ທີ່ບໍ່ຕ້ອງນັບ (ຈາກຂ້າງເທິງ) |
| $1100 | ລວມ |
| - 550 | 50 ເປີເຊັນຂອງ EID |
| $550 | ລາຍໄດ້ທີ່ນັບໄດ້ທັງໝົດ |
| $878 | ການຈ່າຍເງິນຊ່ວຍເຫຼືອສູງສຸດ (ຄອບຄົວ 3 ຄົນໃນເຂດ 1) |
| - 550 | ລາຍໄດ້ທີ່ນັບໄດ້ທັງໝົດ |
| $328 | ຈໍານວນເງິນຊ່ວຍເຫຼືອປະຈໍາເດືອນ |

---

ການປ່ຽນແປງເຫຼົ່ານີ້ກໍ່ຍັງນໍາໃຊ້ກັບຜູ້ຮັບເງິນສົດຊ່ວຍເຫຼືອສໍາລັບຊາວອົບພະຍົບ, ເງິນສົດຊ່ວຍເຫຼືອການເດີນທາງເຂົ້າ, ແລະ ເງິນສົດຊ່ວຍເຫຼືອຜູ້ເຄາະຮ້າຍຈາກການຄ້າມະນຸດແລະຜູ້ເຄາະຮ້າຍຈາກອາຊະຍາກໍາ (ເງິນສົດຊ່ວຍເຫຼືອ TCVAP ແລະ TCVAP CalWORKs), ເພາະວ່າການຈ່າຍເງິນສົດຊ່ວຍເຫຼືອພາຍໃຕ້ໂຄງການເຫຼົ່ານີ້ ອີງຕາມຈໍານວນເງິນໂຄງການ CalWORKs.

ທ່ານຈະໄດ້ຮັບແຈ້ງການກ່ຽວກັບການກະທໍາ (NOA) ສະແດງໃຫ້ເຫັນວ່າການຊ່ວຍເຫຼືອນີ້ເພີ່ມຂຶ້ນໄດ້ແນວໃດ. ຖ້າທ່ານໄດ້ຮັບ CalFresh ນໍາ, ທ່ານອາດຈະໄດ້ຮັບເງິນສົດຊ່ວຍເຫຼືອ CalFresh ໜ້ອຍລົງຍ້ອນວ່າເງິນສົດຊ່ວຍເຫຼືອເພີ່ມຂຶ້ນ. ຖ້າເປັນດັ່ງນັ້ນ, ທ່ານຈະໄດ້ຮັບແຈ້ງການແຍກຕ່າງຫາກທີ່ແຈ້ງໃຫ້ທ່ານຮູ້ຈໍານວນເງິນ CalFresh ໃໝ່ຂອງທ່ານ.